# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດທີ 13 ພຶດສພາ 2018 (5 -13 -2018)

---

# ຢືນຢັດດ້ວຍຄວາມຖ່ອມໃຈ

| |
|---|
| *ສັດຊະນິດໃດທີ່ທຸງບໃສ່ການພຍາຍາມທຍັບເຂົ້າໃກ້ເພື່ອແກ້ໄຂການຜິດພາດຕໍ່ກັນ?* |

**ຈຸດສຳຄັນໃນບົດຮຽນ** :  ການຖ່ອມຕົນຈະຊນະໃນທີ່ສຸດຂອງວັນນັ້ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ມັນແມ່ນ E-mail ທີ່ຂ້າພະເຈົ້າສົ່ງໄປດ້ວຍຄວາມເສັຽໃຈ. ຂ້າພະເຈົ້າໂກດແຄ້ນ ຫຼັງຈາກກອງປະຊຸມບ່ອນທີ່ຂ້າພະເຈົ້າບໍ່ໄດ້ເອົາຈິງເອົາຈັງ, ຂ້າພະເຈົ້າສົ່ງອີແມວແຫ່ງຄວາມຄຽດຮ້າຍໄປໃຫ້ໝູ່ຮ່ວມງານຄົນນຶ່ງ. ຂ້າພະເຈົ້າຣະບາຍຄວາມໂກດໃສ່ລາວ ດ້ວຍອາການທີ່ນັບໄດ້ວ່າເປັນການປະພຶດຫຍາບຄາຍ ແລະຮຽກຮ້ອງໃຫ້ລາວຂໍໂທດ. ຂ້າພະເຈົ້າບໍ່ໄດ້ຊອກຫາຄຳແນະນຳ  ທັງບໍ່ໄດ້ທວນຄືນຄຳເວົ້າຂອງຂ້າພະເຈົ້າເພື່ອໃຫ້ແນ່ໃຈວ່າມັນເໝາະສົມຫຼືບໍ່.  ຂ້າພະເຈົ້າຮອດບໍ່ໄດ້ອະທິຖານກ່ອນຈະກົດຄີ "send."

ຂອບພຣະຄຸນພຣະເຈົ້າ, ຜູ້ຮັບຂໍ້ຄວາມທີ່ຂ້າພະເຈົ້າສົ່ງໄປນັ້ນເປັນຜູ້ມີໃຈເມດຕາກວ່າທີ່ຂ້າພະເຈົ້າມີຢູ່ຫຼາຍເທົ່າ, ແລະພວກເຮົາກໍໄດ້ແກ້ໄຂຄວາມແຕກຕ່າງຂອງພວກເຮົາສ່ວນຫຼາຍແລ້ວ.  ແຕ່ອີແມວກໍຍັງແຜ່ກະຈາຍຄວາມກົດດັນສາຍສັມພັນຂອງພວກເຮົາ ຊຶ່ງຈະບໍ່ມີວັນຄືນດີເໝືອນເດີມໄດ້ຈັກເທື່ອ. ແມ່ນກະທັ້ງປະຈຸບັນ, ຫຼາຍປີຕໍ່ມາ,  ຂ້າພະເຈົ້າຍັງຫວັ່ນວິຕົກນຳຄວາມຊົງຈຳຂອງການສົ່ງອີແມວນັ້ນ ຍັງວົນວຽນຢູ່ໃນຄວາມຮ້ອນອົກເຕືອງໃຈຂນະນັ້ນ.

ເອສະເທີໄດ້ປະສົບກັບຄວາມບໍ່ເປັນທັມທີ່ຮ້າຍແຮງຍິ່ງກວ່າການກະທົບກັບຄວາມຮູ້ສຶກຫຼາຍຕໍ່.  ພວກເຮົາຮຽນຮູ້ຈາກຄວາມລະມັດລະວັງ ຂັ້ນຕອນການປົດປ່ອຍຂອງພຣະນາງຊຶ່ງໃຊ້ຕໍ່ສູ້ກັບຄວາມບໍ່ເປັນທັມຕ້ອງໃຊ້ປັນຍາ, ຄວາມອົດກັ້ນ,  ແລະການຖ່ອມຕົນ.  ການທຍັບເຂົ້າດ້ວຍການເຕັມລົ້ນດ້ວຍພຣະຄຸນ  ໄດ້ສ້າງສະພານຊຶ່ງສາມາດນຳໄປສູ່ການປ່ຽນແປງ,  ແຕ່ການເຄື່ອນໄຫວຢ່າງຟ້າວຟັ່ງເກືອບນຳໄປສູ່ຜົນຮ້າຍສເມີ.

**ພຣະຄັມພີກ່າວວ່າແນວໃດ?** ( ເບິ່ງຕາມຫົວຂໍ້ 1,  ແລະ 2 )

### ການສຶກສາພຣະຄັມພີ

**1. <u>ເອສະເທີ 5:1-8</u>** :

*1ຢູ່ມາໃນວັນທີສາມ ພຣະນາງເອສະເທີ ໄດ້ນຸ່ງເສື້ອຜ້າມະເຫສີ ແລະ ປະທັບຢືນຢູ່ໃນເດີ່ນຊັ້ນໃນ ກົງກັນຂ້າມກັບຫ້ອງ*
*ໂຖງໃຫຍ່ຂອງກະສັດ ກະສັດປະທັບເທິງຣາຊບັນລັງພາຍໃນພຣະຣາຊວັງ ກົງກັນຂ້າມທາງເຂົ້າພຣະຣາຊວັງ  2ເມື່ອ*
*ກະສັດຫຼຽວເຫັນພຣະຣາຊີນີ ເອສະເທີ ຢືນຢູ່ໃນເດີ່ນ ພຣະນາງກໍເປັນທີ່ພໍພຣະທັຍໃນສາຍຕາຂອງພຣະອົງ  ພຣະອົງ*
*ຈຶ່ງຍື່ນໄມ້ເທົ້າຄຳຊຶ່ງຢູ່ໃນພຣະຫັດຂອງພຣະອົງແກ່ພຣະນາງເອສະເທີ  ພຣະນາງເອສະເທີກໍສະເດັດເຂົ້າມາຈັບປາຍ*
*ໄມ້ເທົ້າ  3ກະສັດກ່າວກັບພຣະນາງວ່າ “ມະເຫສີເອສະເທີ ຢາກໄດ້ສິ່ງໃດ ພຣະນາງຕ້ອງການສິ່ງໃດກໍຈະປະທານໃຫ້*
*ແກ່ພຣະນາງເຖິງເຄິ່ງຣາຊອານາຈັກຂອງເຮົາ” 4ແລະພຣະນາງເອສະເທີ ທູນວ່າ “ ຖ້າເປັນທີ່ພໍພຣະທັຍກະສັດ ຂໍກະ*
*ສັດສະເດັດມາພ້ອມກັບຮາມານໃນມື້ນີ້ ເພື່ອງານລ້ຽງທີ່ຂ້ານ້ອຍຈັດຕຽມໄວ້ເພື່ອພຣະອົງ”  5ແລະກະສັດໄດ້ຕອບວ່າ*
*“ຈົ່ງຟ້າວໄປຫາຮາມານ ເພື່ອເພິ່ນຈະໄດ້ເຮັດຕາມທີ່ພຣະນາງເອສະເທີປາຖນາ” ກະສັດຈຶ່ງສະເດັດໄປໃນງານກິນລ້ຽງ*

*ກັບຮາມານ ຊຶ່ງພຣະນາງເອສະເທີ ໄດ້ຈັດຕຽມໄວ້ [6]ຂນະທີ່ຢູ່ໃນງານກິນລ້ຽງ ກຳລັງດື່ມເຫຼົ້າອະງຸ່ນ ກະສັດກໍກ່າວກັບເອສະເທີວ່າ "ຄຳຮ້ອງຂໍຂອງພຣະນາງເປັນສິ່ງໃດນັ້ນ ມັນຈະເປັນທີ່ໂຜດປະທານແກ່ນາງ ແລ້ວຄຳທູນຂໍຂອງພຣະນາງວ່າອັນໃດ ແມ່ນຈະເຖິງເຄິ່ງຣາຊອານາຈັກຂອງເຮົາກໍຈະໃຫ້" [7]ພຣະນາງເອສະເທີທູນວ່າ "ຄຳຮ້ອງຂໍຂອງຂ້ານ້ອຍ ແລະຄຳທູນຂໍຂອງຂ້ານ້ອຍ ຄື [8]ຖ້າຂ້ານ້ອຍເປັນທີ່ພໍພຣະທັຍໃນສາຍພຣະເນດຂອງກະສັດ ແລະເປັນທີ່ພໍພຣະທັຍກະສັດທີ່ຈະປະທານຕາມຄຳຮ້ອງຂໍຂອງຂ້ານ້ອຍ ແລະໃຫ້ຄຳທູນຂໍຂອງຂ້ານ້ອຍສຳເຣັດ ຂໍກະສັດສະເດັດມາທີ່ງານກິນລ້ຽງຊຶ່ງຂ້ານ້ອຍຈັດຕຽມໄວ້ພ້ອມກັບຮາມານ ແລະມື້ອື່ນນີ້ຂ້ານ້ອຍຈະເຮັດຕາມທີ່ກະສັດກ່າວນັ້ນ."*

ເອສະເທີໄດ້ທຳການຕັດສິນໃຈ. ພຣະນາງໄດ້ໃຊ້ອິດທິພົນເທົ່າທີ່ນາງມີ ແລະເຂົ້າໄປຫາກະສັດກ່ຽວກັບແຜນການທຳລາຍລ້າງໄພ່ພົນຂອງພຣະນາງທີ່ຈວນຈະມາເຖິງນັ້ນ. ພຣະນາງພໍພຣະທັຍທີ່ຈະເອົາຊີວິດຂອງພຣະນາງເຂົ້າສ່ຽງ, ແຕ່ພຣະນາງບໍ່ໄດ້ເອົາໜ້າທີ່ເຂົ້າໄປແບບງ່າຍໆ. ພຣະນາງ ແລະໄພ່ພົນຂອງພຣະນາງໄດ້ຖືສິນອົດອາຫານຕັ້ງສາມວັນກ່ອນທີ່ຈະເຂົ້າໄປເຝົ້າກະສັດ(ເອສະເທີ 4:16-17). ເຖິງແມ່ນພຣະອົງເປັນພຣະສວາມີຂອງພຣະນາງກໍຕາມ ກະສັດເຊເຊັດເປັນກະສັດທີ່ໂຫດຫ້ຽມກົດຂີ່ຂົ່ມເຫັງ; ດັ່ງນັ້ນການເຂົ້າເຝົ້າກະສັດຈຶ່ງເປັນຕາໜ້າຢ້ານແມ່ນກະທັ້ງພຣະຣາຊິນີເອສະເທີ. ພຣະນາງຫວ່ານປັນຍາໃນການເຂົ້າເຝົ້າຂອງພຣະນາງ ແລະຊນະຕໍ່ສິ່ງທີ່ກົງກັນຂ້າມກັບການຖ່ອມຕົນຂອງພຣະນາງ. ບາງທີເປັນເພາະພຣະນາງຮູ້ປັນຍາຂອງສຸພາສິດ ທີ່ກ່າວເຖິງຄົນປະເພດທີ່ມີພິກໄຫວ ທີ່ຈະສົ່ງຜົນໃຫ້ຜູ້ນັ້ງຢືນຢູ່ຕໍ່ພຣະພັກກະສັດໄດ້ (ເບິ່ງ ສຸພາສິດ 22:29).

***ໃນທາງໃດທີ່ການກະທຳຂອງເອສະເທີສະແດງໃຫ້ເຫັນຄວາມກ້າຫານແລະການຖ່ອມຕົວ ?***

ເອສະເທີ ບໍ່ໄດ້ເຂົ້າໄປເຝົ້າພຣະຣາຊາໃນການແຕ່ງຕົວດ້ວຍການນຸ່ງໄຖ່ປ່ານ ແລະໂຮຍຂີ້ເຖົ່າ. ພຣະນາງນຸ່ງເຄື່ອງທົງຂອງພຣະຣາຊິນີຊຶ່ງເໝາະສົມກັບພຣະຣາຊາ. ເອສະເທີ ເຮັດເຊັ່ນນີ້ເພື່ອທວນຄວາມຈຳ ອາຣາຊູຣັສ, ຜູ້ຊຶ່ງບໍ່ໄດ້ເຫັນມະເຫສີໄດ້ສາມສິບວັນແລ້ວ ຈັ່ງແມ່ນພຣະນາງງາມຍິບຍັບພຽງໃດ. ເອີສະເທີໄດ້ເອົາຊະນະໃຈຂອງພຣະອົງ ແລະອາຣາຊູຣັສໄດ້ປະທານອານຸຍາດໃຫ້ພຣະນາງເຂົ້າເຝົ້າພຣະອົງ.

. ແຕ່ເອສະເທີສາມາດທູນຂໍພຣະຣາຊາ, ຂນະນັ້ນແລະທີ່ນັ້ນ, ເພື່ອປົກປັກຮັກສາຊາວອິສຣາເອນ. ແຕ່ພຣະນາງເລືອກທີ່ຈະເອົາສະພາບການທີ່ສົມບູນທີ່ສຸດ, ໃນເວລາຫົວໃຈຂອງພຣະຣາຊາຊົງປະທັບໃນບ່ອນທີ່ຖືກຕ້ອງ ເພື່ອຕອບສນອງຕໍ່ການທູນຂໍຂອງພຣະນາງ. ເຫດໃດ? ເອສະເທີຮູ້ຄຸນຄ່າຂອງຊ່ວງເວລາ ແລະການສ້າງຄວາມສັມພັນ. ຖ້າພຣະນາງຮີບຮ້ອນເລັ່ງການທູນຂໍ, ໂອກາດຈະໄດ້ຮັບຄຳຕັດສິນອາດຈະສູນເສັຽໄປຕລອດການ ແລະທີ່ນັ້ນ, ເພື່ອປົກປັກຮັກສາຊາວອິສຣາເອນ. ແຕ່ພຣະນາງເລືອກທີ່ຈະເອົາສະພາບການທີ່ສົມບູນທີ່ສຸດ, ໃນເວລາຫົວໃຈຂອງພຣະຣາຊາຊົງປະທັບໃນບ່ອນທີ່ຖືກຕ້ອງ ເພື່ອຕອບສນອງຕໍ່ການທູນຂໍຂອງພຣະນາງ. ເຫດໃດ? ຖ້າຊາວຢິວຄົນໃດໃນຊູຊາຊາບໃນສິ່ງທີ່ເອສະເທີກະທຳລົງໄປ, ພວກເຂົາກໍອາດຖາມການກະທຳຂອງພຣະນາງ. *ເຫດໃດ ພຣະນາງຈຶ່ງໃຫ້ກຽດຜູ້ຊາຍຢ່າງຮາມານ, ຜູ້ຊຶ່ງໄດ້ອອກພາຍສັ່ງຫານພວກເຂົາ? ພຣະນາງຍັງບັງອາດຖວາຍກຽດພຣະຣາຊາຜູ້ຊຶ່ງໄດ້ເຊັນຕັດຮອນອິສຣະພາບຂອງພວກເຂົາ ໄດ້ຫຼື?* ຕໍ່ຂີດຄວາມຢ້ານກົວຕໍ່ຄວາມຕາຍຂອງຊາວຢິວແຕ່ລະຄົນ, ການກະທຳຂອງພຣະນາງກໍອາດຖືກຄັດຄ້ານກໍເປັນໄດ້.

ແຕ່ການເຂົ້າເຝົ້າຂອງພຣະນາງເປັນການສລາດຫຼາຍ. ຊຶ່ງພຣະເຢຊູໄດ້ຊູຄວາມກ້າຫານຂອງເຫຼົ່າສາວົກຂອງພຣະອົງວ່າ " ຈົ່ງສລາດເໝືອນງູ ແລະສຸພາບເໝືອນນົກເຂົາ" (ມັດທາຍ 10:16). ກະທຳໃນສິ່ງທີ່ຖືກຕ້ອງບໍ່ແມ່ນພຽງແຕ່ເຮັດໃຫ້ຖືກຕາມເຣື່ອງເທົ່ານັ້ນ; ມັນກ່ຽວກັບການໃຊ້ຄວາມສລຽວສລາດ ແລະຄວາມຄ່ອງແຄ້ວຂອງເຮົາເພື່ອບັນລຸຜົນດີເຕັມສ່ວນ. ມັນຈະບໍ່ເປັນຜົນດີສຳລັບເຮົາເລີຍ ຖ້າເຮົາພຽງແຕ່ໂກດຮ້າຍຕໍ່ສູ້ສິ່ງຊົ່ວຮ້າຍ ການທຳງານສ້າງຄວາມສັມພັນກັບຄົນຜູ້ຊຶ່ງຈະນຳການປ່ຽນແປງມາໃຫ້. ນີ້ແມ່ນຄວາມຊັດຈິງ ເຖິງແມ່ນເຮົາເອົາກິດເອົາການ ບໍ່ວ່າ

ເພື່ອການປຸ່ງນແປງໃນຄອບຄົວ, ໃນໂບດ ແລະໃນຊຸມຊົນກໍແລ້ວແຕ່. ພວກເຮົາສາມາດລຸກຂຶ້ນສູ້ເພື່ອຜູ້ອື່ນດ້ວຍການຖ່ອມຕົວຢ່າງດຽວກັນກັບເອສະເທີ. ພຣະນາງບໍ່ໄດ້ຮຽກຮ້ອງສິ່ງທີ່ຢູ່ຕາມທາງຂອງພຣະນາງຍ້ອນວ່າພຣະນາງເປັນພຣະຣາຊີນີ. ຊີວິດຂອງຄຣິສຕຽນຮຽກຮ້ອງໃຫ້ມີການຖ່ອມຕົວ, ແຕ່ມັນບໍ່ງ່າຍສເມີໄປ. ມັນເປັນການງ່າຍກວ່າທີ່ເຮົາຈະປະຄວາມໂກດຮ້າຍ ແລະຄວາມອວດອົ່ງຂອງເຮົາຕາມທາງ ໃນຍາມຈັດການກັບບັນຫາຕ່າງໆ.

ການຖ່ອມຕົວເປັນສິ່ງງົດງາມ, ແລະ ມັນໃຊ້ງານໄດ້ດີຢ່າງວິເສດເມື່ອການກະທຳຂອງເຮົາສຳແດງອອກຕໍ່ຄົນອື່ນ. ການຖ່ອມຕົນບໍ່ເຮັດໃຫ້ຕົກຕໍ່າລົງ, ແຕ່ຈະຕ້ອງໄດ້ລຸກຂຶ້ນດ້ວຍການເປັນເໝືອນພຣະຄຣິດ ຊຶ່ງເຮັດໃຫ້ແຕກຕ່າງ. ດັ່ງກະສັດໂຊໂລໂມນຈຶ່ງກ່າວວ່າ "ຄຳຕອບທີ່ອ່ອນຫວານລະງັບຄວາມໂກດໄດ້" (ສຸພາສິດ 15:1).

| |
|---|
| ***ແມ່ນຫຍັງເປັນເຣື່ອອັນໃຫຍ່ທີ່ສຸດຊຶ່ງພວກເຮົາມັກປະເຊີນ ເມື່ອເຮົາຮັກສາ ການຖ່ອມຕົວໃນຊີວິດເຮົາ?*** |

## 2. <u>ເອສະເທີ 5:9-14</u> :

*[9]ມື້ນັ້ນ ຮາມານກໍອອກໄປດ້ວຍໃຈຊື່ນບານ ແລະຍິນດີ ແຕ່ເມື່ອຮາມານເຫັນມໍເດກາຍຢູ່ປະຕູຂອງກະສັດບໍ່ຢືນຂຶ້ນ ຫຼືຕົວສັ່ນຢູ່ຕໍ່ໜ້າຕົນ ເພິ່ນກໍດ່າມໍເດກາຍ [10]ເຖິງຢ່າງນັ້ນກໍດີ ຮາມານອົດກັ້ນໄວ້ ກັບໄປເຮືອນໃຊ້ໃຫ້ຄົນໄປຕາມບັນດາເພື່ອນຂອງຕົນ ແລະ ນາງເຊເຣັດເມັຽຂອງຕົນ [11]ຮາມານພັລນາເຖິງຄວາມຮຸ່ງເຮືອງງົດງາມແຫ່ງຄວາມຮັ່ງມີຂອງຕົນຈຳນວນລູກຂອງຕົນ ແລະກຽດຕິຍົດທັງໝົດຊຶ່ງກະສັດປະທານແກ່ຕົນ ແລະເຖິງເຣື່ອງວ່າກະສັດໄດ້ເລື່ອນຕົນຂຶ້ນເໜືອເຈົ້ານາຍ ແລະຂ້າຣາຊການຂອງກະສັດຢ່າງໃດ [12]ແລ້ວຮາມານເສີມວ່າ “ແມ່ນພຣະຣາຊີນີເອສະເທີກໍບໍ່ໄດ້ໃຫ້ຜູ້ໃດໄປກັບກະສັດໃນງານກິນລ້ຽງ ຊຶ່ງພຣະນາງໄດ້ຈັດຂຶ້ນນອກເໜືອຈາກຕົວຂ້ອຍ ແລະມື້ອື່ນນີ້ພຣະນາງໄດ້ເຊີນຂ້ອຍກັບກະສັດອີກ [13]ແຕ່ສິ່ງເຫຼົ່ານີ້ບໍ່ໄດ້ເປັນປໂຍດແກ່ຂ້ອຍ ຕາບໃດທີ່ຂ້ອຍເຫັນມໍເດກາຍຊາວຢິວນັ່ງຢູ່ທີ່ປະຕູຂອງກະສັດ” [14]ເຊເຣັດເມັຽຂອງເພິ່ນ ແລະສະຫາຍທັງໝົດຂອງເພິ່ນຈຶ່ງເວົ້າກັບເພິ່ນວ່າ “ ຂໍເຮັດບ່ອນແຂວນຄໍສູງຫ້າສິບສອກ ຮຸ່ງເຊົ້າກໍທູນກະສັດໃຫ້ແຂວນ ມໍເດກາຍໃນບ່ອນນັ້ນ ແລະຈິ່ງໄປກິນລ້ຽງຢ່າງຊື່ນບານກັບກະສັດ” ຄຳແນະນຳນີ້ເປັນທີ່ພໍໃຈຮາມານ ເພິ່ນຈຶ່ງສັ່ງໃຫ້ເຮັດບ່ອນແຂວນຄໍໄວ້.*

ຮາມານສະແດງຕົວກົງກັນຂ້າມກັບການຖ່ອມຕົວຂອງເອສະເທີຢ່າງສິ້ນເຊີງ. ທ່ານສາມາດຮູ້ສຶກເຍື່ອໃຍແຕ່ລະບາດກ້າວຂອງຮາມານໃນເມື່ອເພິ່ນອອກຈາກພຣະຣາຊວັງ . ແລ້ວເພິ່ນກໍຍ່າງຜ່ານປະຕູໂຂງຂອງກະສັດ ແລະມໍເດກາຍກໍນັ່ງຢູ່ຫັ້ນ, ບໍ່ຍອມສະແດງຄວາມໂຄຣົບໃດໆຕໍ່ຮາມານ. ຄວາມຕື່ນເຕັ້ນດີໃຈຂອງຮາມານ ໄດ້ກັບກາຍເປັນໂມໂຫເປັນຟືນເປັນໄຟທັນທີ. ໃນຕອນນີ້, ຂໍ້ 10 ບັນທຶກຄຸນລັກສະນະດີສິ່ງດຽວທີ່ເຫຼືອໃຫ້ເຮົາເຫັນໃນຊີວິດຮາມານກໍມີແຕ່:*"ຮາມານຄວບຄຸມສຕິຕົນເອງໄວ້ໄດ້."* ມັນເປັນສິ່ງສຳຄັນທີ່ຈະຢຸດແລະ ສັງເກດຄວາມກ້າຫານສືບຕໍ່ໄປຂອງມໍເດກາຍ, ຜູ້ຊຶ່ງຍັງບໍ່ຍອມຍືນກົ້ມຫົວ ຫຼືສະແດງຄວາມຢ້ານກົວຕໍ່ໜ້າຮາມານ; ເພິ່ນບໍ່ເຮັດແມ່ນກະທັ້ງຕົວສັ່ນເມື່ອຂ້າຣາຊການຊັ້ນຜູ້ໃຫຍ່ຜ່ານມາ. ຈົ່ງພິຈາຣະນາເບິ່ງຄວາມໂຫດຫ້ຽມຂອງຮາມານເດັ່ນຊັດພຽງໃດ, ແນ່ນອນ ຄົນອື່ນໆໃນພຣະຣາຊວັງກໍເກງກົວເພິ່ນ. ມໍເດກາຍ ແລະເອສະເທີຢູ່ເພື່ອສິ່ງໃດສິ່ງນຶ່ງ ແລະຜູ້ໃດຜູ້ນຶ່ງ ຫລາຍກວ່າເພື່ອຕົວເອງ, ແຕ່ຮາມານແມ່ນກ່ຽວກັບຮາມານເອງ. ເພິ່ນບໍ່ໄດ້ສົນໃຈໃນການໃຊ້ຕຳແໜ່ງອັນສູງສົ່ງຂອງລາວເພື່ອຣາຊອານາຈັກເປີເຊັຽເພື່ອຮັບໃຊ້ປະຊາຊົນ; ເພິ່ນສົນໃຈນຳແຕ່ອຳນາດ ແລະກຽດສັກສີຂອງຕົນເອງ. ຮາມານຢູ່ເພື່ອໃຫ້ພໍໃຈຕົນເອງ. ແມ່ນແຕ່ຢູ່ເຮືອນກັບຄອບຄົວ ແລະໝູ່ເພື່ອນ, ເພິ່ນກໍຄຸຍໂມ້ເຣື່ອງຂອງຕົວເອງ. ແນ່ນອນ ເຂົາໄດ້ຍິນມາໝົດແລ້ວກ່ອນໜ້ານີ້, ຮາມານເພີດເພີນຢູ່ກັບເຣື່ອງຍົດສັກ ແລະຄວາມຮັ່ງມີເພີ້ມທະວີຂຶ້ນຕື່ມ. ໃນຄວາມຄິດຂອງຮາມານ ແລະຄວາມຄິດຂອງເພື່ອນໆແລະຄອບຄົວ ຄວາມຈິງໃນຂໍ້ນີ້ໄດ້ຢືນຢັນວ່າ ເປັນການກະໂດດຂຶ້ນສູ່ຕຳແໜ່ງສູງສົ່ງທາງລັດໃນຣາຊອານາຈັກເປີເຊັຽ. ສມັຍນີ້ເຮົາອາດເວົ້າໄດ້ວ່າ, *" ຮາມານເປັນຕົວການໃຫຍ່."*

. ແຕ່ພວກເຮົາເຫັນຄວາມເສົ້າໃຈທີ່ຮ້າຍແຮງ ກ່ຽວກັບຮາມານ. ເຖິງແມ່ນວ່າຮາມານຮັ່ງມີ, ມີອຳນາດ, ມີກຽດຕິຍົດ

ກໍຕາມ, ຮາມານຍັງມີຄວາມຄວາມບໍ່ອີ່ມໃຈຢູ່ເລີກໆ. ການນະມັສການຕົວເອງຂອງລາວແຜ່ກິດຕິສັບໄປທົ່ວຊຶ່ງລາວບໍ່ສາມາດພົບຄວາມສຸກໄດ້ຈົນກວ່າທຸກໆຫົວຄົນຈະຮັບຮູ້ຄວາມຍິ່ງໃຫຍ່ຂອງລາວ. ການບໍ່ຍອມກົ້ມຫົວໃຫ້ຄວາມຄິດກວນໝູ່ຂອງຮາມານ, ເປັນເໝືອນຫີນແຫ່ຢູ່ໃນເກີບຂອງລາວ. ຍິ່ງໆໄປກວ່ານັ້ນ ເພິ່ນໄດ້ສັ່ງໃຫ້ເຮັດບ່ອນແຂວນຄໍເພື່ອສະແດງການແກ້ແຄ້ນຂອງເພິ່ນໃຫ້ທຸກຄົນເຫັນ.

. ພວກເຮົາຈະຄິດວ່າເຮົາບໍ່ມີນິສັຍຢ່າງຮາມານພາຍໃນເຮົາ ແຕ່ຄວາມຈິງທີ່ເສົ້າໃຈກໍແມ່ນ ພວກເຮົາທຸກຄົນມັກຈະອ່ຽງໄປຫາຄວາມເຫັນແກ່ຕົວ ແລະຜະເດັດການ. ພວກເຮົາເປັນສາຍລວດແຂງກະດ້າງ ກັບຄວາມປາຖນາ ຊຶ່ງຈະຖືກຜູ້ອື່ນຈ້ອງມອງຢູ່. ແມ້ກະທັ້ງສຽງຮ້ອງໄຫ້ໜ້າອາຍລັບໆຊ້ອນຢູ່, *"ເບິ່ງຂ້ອຍນີ້!"* ມັນເປັນສະພາບເກົ່າສ່ວນຕ່າງໆຂອງເຮົາ, ສະພາບມະນຸດເກົ່າຊອກຫາຄວາມພຽບພ້ອມ, ອຳນາດ, ຄວາມຮັ່ງມີ, ແລະຖານະດີ.

. ພວກເຮົາຈະເຫັນໃນບົດໜ້າວ່າ ຄວາມເຫັນແກ່ຕົວຂອງຮາມານໃນມຸມມອງຂອງໂລກ ບໍ່ພຽງແຕ່ບໍ່ເປັນທີ່ພໍໃຈເທົ່ານັ້ນ, ມັນຍັງເຮັດໃຫ້ເກີດຄວາມເສັຽຫາຽຢ່າງໃຫຍ່ຫຼວງ. ຮາມານຊັກນຳເຮົາໃຫ້ເຫັນກ່ອງປື້ມ ຜືນເບື່ອ ຂອງຄວາມອວດຕົວແລະຄວາມຂົມຂື່ນ; ຄວາມອວດຕົວຂອງເພິ່ນແມ່ນກະທັ້ງນຳຄວາມຕາຍມາສູ່ຕົວເພິ່ນເອງ. ດັ່ງທີ່ໂຊໂລໂມນໄດ້ກ່າວໄວ້ວ່າ, "ຄວາມອວດຈອງຫອງນຳໄປສູ່ການທຳລາຍ ແລະການເວົ້າຫຍາບຊ້ານຳໄປສູ່ການຫຼົ້ມຈົມ" (ສຸພາສິດ 16:18).

. ຮາມານນຶກບໍ່ອອກວ່າແມ່ນຫຍັງເກີດຂຶ້ນກັບເພິ່ນ. ອາດເປັນເພາະວ່າສານໄດ້ເລື່ອນໄປ, ນັ້ນໝາຍຄວາມວ່າມັນອາດຖືກປະຕິເສດ. ພຣະເຈົ້າຍັງຢູ່ໃນຣະຫວ່າງການທຳງານຂອງພຣະອົງ.

. ພວກເຮົາຮຽນຮູ້ຈາກຕົວຢ່າງທັງສອງ: ການຖ່ອມຕົວຂອງຮາມານ ແລະ ການອວດອີ່ງຂອງຮາມານ. ພວກເຮົາຄວນຂໍໃຫ້ພຣະເຢຊູເອົາຄວາມຂົມຂື່ນໃນຫົວໃຈອອກໄປ, ທຳລາຍຄວາມໂນ້ມອຽງໄປຫາຄວາມອວດອີ່ງ ແລະໂຫດຫ້ຽມ ແລະຮັກສາເຮົາໃຫ້ຍິນດີຖ່ອມລົງໃນພຣະອົງ.

| |
|---|
| *ເປັນຫຍັງການອວດອີ່ງຈຶ່ງເປັນພັຍອັນຕະລາຍ?* |

## ນຳໃຊ້ໃນຊີວິດ

ເຖິງແມ່ນຄວາມອວດຕົວຄ້າຍກັບວ່າເປັນຄວາມຜິດພາດຂອງເຮົາໃນໂລກເສື່ອມໂຊມນີ້, ຄວາມຖ່ອມຕົວອາດເປັນສິ່ງດີສຳລັບຄຣິສຕຽນ. ຈົ່ງເລືອກນຶ່ງຄຳແນະນຳຕໍ່ລົງໄປນີ້:

- **ສະທ້ອນ.** ຈົ່ງສະທ້ອນຄວາມອ່ອນໂຍນຂອງທ່ານໄປສູ່ຄວາມເຫັນແກ່ຕົວ, ຄວາມຂົມຂື່ນ, ຫຼືຊອກຫາອຳນາດໃນທາງຄວາມເສັຽຫາຍຂອງຄົນອື່ນ. ຈົ່ງສາຣະພາບ ແລະມອບການປະພຶດບາບ ແລະການກະທຳບາບໃຫ້ພຣະເຈົ້າ.
- **ທົບທວນ.** ເຮັດບັນຊີການເຊື່ອຟັງຂອງທ່ານໃນປັດຈຸບັນ ແລະ ສິ່ງອັນດັບແລກສິ່ງໃດສິ່ງນຶ່ງທີ່ອາດບຳລຸງລ້ຽງຄວາມອວດຕົວ ຫຼືຄວາມເຫັນແກ່ຕົວ. ຈົ່ງພິຈາຣະນາດ້ວຍໃຈອະທິຖານ ຖອນຕົວອອກຈາກ ຫຼືລົບລ້າງສິ່ງທີ່ລ້ຽງຄວາມເຫັນແກ່ຕົວ ຫຼືຄວາມໂມໂຫໄວ້.
- **ປອງດອງ.** ຖ້າຄວາມອວດຕົວໃນໄລຍະຜ່ານມາກໍ່ໃຫ້ເກີດບັນຫາໃນຄວາມສັມພັນ ຫຼືປຸກປັ່ນຄວາມກຽດຊັງຄົນອື່ນ, ຈົ່ງພິຈາຣະນາດ້ວຍໃຈອະທິຖານເຂົ້າສູ່ການປອງດອງ. ອ້ອນວອນຂໍພຣະເຈົ້າຊ່ວຍທ່ານໃຫ້ອະພັຍຫຼືຂໍການອະພັຍ.

ພວກເຮົາມີໂອກາດຢ່າງບໍ່ອາດພັລນານັບໄດ້ໃນການກະທຳລົງໄປຢ່າງຮີບຮ້ອນໂດຍບໍ່ໄດ້ຄຳນຶງເຖິງຜູ້ອື່ນ. ຂໍໃຫ້ເຮົາເຮັດໃນສິ່ງດີກວ່າ ສິ່ງທີ່ເໝືອນພຣະຄຣິດ ແລະກະທຳດ້ວຍປັນຍາ ແລະການຖ່ອມຕົວ.